ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0099----

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ /ກປຝ
ນະຄອນຫຼວງວຽງຈັນ, ວັນທີ 19 JAN 2021

# ແຈ້ງການ

**ເຖິງ:** - ທ່ານ ຫົວໜ້າຂະແໜງປູກຝັງ ແຂວງ ຫຼວງນໍ້າທາ
- ທ່ານ ຫົວໜ້າດ່ານກັກກັນພືດສາກົນບໍ່ເຕັນ ແຂວງ ຫຼວງນໍ້າທາ

**ເລື່ອງ:** ການກວດກາ ແລະ ຢັ້ງຢືນສຸຂານາໄມພືດຕະກຸນຖົ່ວ (ຖົ່ວເບີ, ຖົ່ວຂຽວຝັກສີດ, ຖົ່ວເຫຼືອງຝັກສົດ ຫຼື ຖົ່ວຂົນ) ສໍາລັບສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ພາຍໃຕ້ໂຄງການປູກພືດທົດແທນຝິ່ນ ເລີ່ມແຕ່ທ້າຍເດືອນ ມັງກອນ 2021 ເຖິງ ວັນທີ 30 ພຶດສະພາ 2021

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ມາດຕະການສຸຂານາໄມພືດ ສໍາລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມປູກຝັງ ສະບັບເລກທີ 3825/ກປ, ລົງວັນທີ 18 ສິງຫາ 2017.

ກົມປູກຝັງ ຂໍຖືເປັນກຽດແຈ້ງມາຍັງຂະແໜງປູກຝັງແຂວງ ຫຼວງນໍ້າທາ ແລະ ດ່ານກັກກັນພືດສາກົນບໍ່ເຕັນ ແຂວງ ຫຼວງນໍ້າທາ ຊາບວ່າ: ພືດຕະກຸນຖົ່ວ ເຊັ່ນ: ຖົ່ວເບີ, *Phaseolus vulgaris* L. (ລະຫັດພາສີນໍາເຂົ້າຂອງ ສປ ຈີນ: 0708200000), ຖົ່ວຂຽວຝັກສົດ, *Vigna umbellate* L. (ລະຫັດພາສີນໍາເຂົ້າຂອງ ສປ ຈີນ: 0713319000) ແລະ ຖົ່ວເຫຼືອງຝັກສົດ (ຖົ່ວຂົນ), *Glycine max* (ລະຫັດພາສີນໍາເຂົ້າຂອງ ສປ ຈີນ: 0708900000) ພາຍໃຕ້ໂຄງການປູກພືດທົດແທນຝິ່ນ ຢູ່ ບັນດາແຂວງເປົ້າໝາຍພາກເໜືອ ຂອງ ສປປ ລາວ ທີ່ມີຈຸດປະສົງ ສົ່ງອອກ ຈາກ ສປປ ລາວ ໄປຍັງ ສປ ຈີນ ໃຫ້ປະຕິບັດມາດຕະການສຸຂານາໄມພືດພືດຕະກຸນຖົ່ວ ສໍາລັບການສົ່ງອອກ ດັ່ງລຸ່ມນີ້:

1. ຜູ້ສົ່ງອອກ ຕ້ອງມີຄູ່ສໍາພັນທຸລະກິດກັບຜູ້ນໍາເຂົ້າຂອງ ສປ ຈີນ ທີ່ໄດ້ຮັບອະນຸຍາດທີ່ຖືກຕ້ອງ ຈາກ ສປ ຈີນ;
2. ການສົ່ງອອກຊຸດສິນຄ້າທຸກຄັ້ງ ຕ້ອງຜ່ານການກວດກາ ແລະ ມີໃບຢັ້ງຢືນສຸຂານາໄມພືດ ອອກໃຫ້ໂດຍເຈົ້າໜ້າທີ່ກັກກັນພືດປະຈໍາດ່ານສາກົນບໍ່ເຕັນ ແຂວງ ຫຼວງນໍ້າທາ ຕາມອະນຸສັນຍາສຸຂານາໄມພືດ ຂອງ ສອງຝ່າຍ ທີ່ກໍານົດໄວ້;
3. ໃຫ້ຂະແໜງປູກຝັງແຂວງ ຫຼວງນໍ້າທາ ແລະ ດ່ານກັກກັນພືດສາກົນບໍ່ເຕັນ ຈັດຕັ້ງປະຕິບັດຕາມແຈ້ງສະບັບນີ້ຢ່າງເຂັ້ມງວດ. ໃນການຈັດຕັ້ງປະຕິບັດ, ພົບຂໍ້ສະດວກ ແລະ ຫຍຸ້ງຍາກແນວໃດ ໃຫ້ລາຍງານຫາກົມປູກຝັງ ເພື່ອແກ້ໄຂໃຫ້ທ່ວງທັນກັບເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດ ຕາມທາງຄວນດ້ວຍ.

**ຫົວໜ້າກົມປູກຝັງ**

ກົມປູກຝັງ

ຈັນທາ ທິບພະວົງພັນ

**ສໍາເນົານໍາສົ່ງ:**
- ຂະແນກ ກປ ແຂວງ ຫຼວງນໍ້າທາ 1 ສະບັບ
- ເກັບມ້ຽນ 1 ສະບ